ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 165 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 05/07/21

# ມະຕິ

## ຂອງຄະນະປະຈຳສະພາແຫ່ງຊາດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ

---

- ອີງຕາມ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ, ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015, ສະບັບປັບປຸງ ເລກທີ 10/ສພຊ, ລົງວັນທີ 14 ພະຈິກ 2016 ແລະ ສະບັບປັບປຸງ ເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມມະຕິວ່າດ້ວຍການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 163/ຄປຈ, ລົງວັນທີ 5 ກໍລະກົດ 2021.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໃຫ້ໄດ້ຮັບຜົນດີ

### ຄະນະປະຈຳສະພາແຫ່ງຊາດຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ມະຕິສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ ຂອງກຳມາທິການເສດຖະກິດ,

ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແປໃສ່ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ເຂົ້າໃສ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ໃນແຕ່ລະໄລຍະໃນຖານະເປັນເສນາທິການ ຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ມີປະສິດຜົນດີ ປະກອບສ່ວນເຮັດໃຫ້ວຽກງານຂອງສະພາແຫ່ງຊາດ ໄດ້ຮັບການປະຕິບັດ ແລະ ມີຜົນສຳເລັດຕາມລະດັບຄາດໝາຍ.

**ມາດຕາ 2 ທີ່ຕັ້ງ**

ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແມ່ນກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ຊຶ່ງໄດ້ຖືກຮັບຮອງເອົາໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ, ປະກອບດ້ວຍສະມາຊິກສະພາແຫ່ງຊາດທີ່ເປັນກຳມະການສັງກັດກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທີ່ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ໃນທົ່ວປະເທດ, ມີຊື່ຫຍໍ້ເປັນຕົວອັກສອນ "ກສຕສ".

**ມາດຕາ 3 ພາລະບົດບາດ**

ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ການຄົ້ນຄວ້າບັນຫາສຳຄັນພື້ນຖານຂອງປະເທດຊາດ, ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍມະຕິຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ຄົ້ນຄວ້າປະກອບຄຳເຫັນ ກ່ຽວກັບ ການໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ຄຳສະເໜີຂອງປະຊາຊົນ ໃນຂົງເຂດ ກະສິກຳ ແລະ ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ, ອຸດສາຫະກຳ ແລະ ການຄ້າ, ເຕັກໂນໂລຊີ ແລະ ການສື່ສານ, ພະລັງງານ ແລະ ບໍ່ແຮ່ ແລະ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຂດເສດຖະກິດພິເສດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍ ຂອງຄະນະປະຈຳສະພາແຫ່ງຊາດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4 ໜ້າທີ່**

**4.1. ດ້ານນິຕິບັນຍັດ:**

1. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ກ່ຽວກັບ ແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ແລະ ແຜນປະຈຳປີ ພ້ອມທັງ ເປັນເຈົ້າການຕິດຕາມ ແລະ ຊຸກຍູ້ ໃຫ້ຂະແໜງການດັ່ງກ່າວ ປະຕິບັດຕາມແຜນການສ້າງ ແລະ ປັບປຸງກົດໝາຍ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ;
2. ຄົ້ນຄວ້າ ແລະ ປະກອບຄຳເຫັນ ໃສ່ ຮ່າງລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫຼື ຂອງພາກສ່ວນອື່ນທີ່ກ່ຽວຂ້ອງສະເໜີມາ;

3. ຄົ້ນຄວ້າ, ປະກອບຄຳເຫັນໃສ່ ບົດສະເໜີຂອງລັດຖະບານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ພົວພັນກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາ;
4. ປະສານສົມທົບກັບກຳມາທິການ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຈັດກອງປະຊຸມສຳມະນາປະກອບຄຳເຫັນໃສ່ຮ່າງກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

**4.2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ**

1. ຄົ້ນຄວ້າ, ກວດກາ ແລະ ປະກອບຄຳເຫັນໃສ່ ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ແລະ ປະຈຳປີ ຂອງລັດຖະບານ ທີ່ຢູ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າ, ກວດກາ ແລະ ລາຍງານ ຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ກ່ຽວກັບ ການລົງທຶນຂະໜາດໃຫຍ່ ຫຼື ໂຄງການລົງທຶນທີ່ມີຜົນກະທົບທີ່ຮ້າຍແຮງຕໍ່ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຫຼື ບັນຫາອື່ນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ;
3. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

**4.3. ດ້ານການຕິດຕາມກວດກາ**

1. ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ລວມທັງ ການອອກນິຕິກຳໃຕ້ກົດໝາຍ ຂອງຂະແໜງການຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
2. ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວິໄສທັດ, ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
3. ຕິດຕາມການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຕາມການສະເໜີຂອງປະຊາຊົນ ຫຼື ການຈັດຕັ້ງ;
4. ຄົ້ນຄວ້າ ແລະ ສັງລວມລາຍງານ ກ່ຽວກັບ ການຍົກເລີກນິຕິກຳໃຕ້ກົດໝາຍ ຂອງຂະແໜງການຕ່າງໆທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ທີ່ເຫັນວ່າຂັດກັບລັດຖະທຳມະນູນ ແລະ ກົດໝາຍ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
5. ຄົ້ນຄວ້າ, ພິຈາລະນາ ຂໍ້ສະເໜີ, ຄຳຮ້ອງຂໍຄວາມເປັນທຳ ແລະ ຄຳສະເໜີຜ່ານສາຍດ່ວນຂອງກອງປະຊຸມສະພາແຫ່ງຊາດ ພ້ອມທັງ ຕິດຕາມຜົນຂອງການແກ້ໄຂຂໍ້ສະເໜີ, ຄຳຮ້ອງຂໍຄວາມເປັນທຳ ຂອງປະຊາຊົນ ແລະ ວຽກງານສາຍດ່ວນຂອງກອງປະຊຸມສະພາແຫ່ງຊາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
6. ຕິດຕາມ ແລະ ຊຸກຍູ້ການປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດທີ່ຕົນຮັບຜິດຊອບ;
7. ເກັບກຳ, ວິເຄາະຂໍ້ມູນ-ຂ່າວສານ ກ່ຽວກັບບັນຫາໃດໜຶ່ງ ຂອງຂະແໜງການ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອນຳສະເໜີໃຫ້ຂະແໜງການຄົ້ນຄວ້າແກ້ໄຂ ຫຼື ສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ເພື່ອສະເໜີລັດຖະບານຄົ້ນຄວ້າໃຫ້ຖືກຕ້ອງຕາມກົດໝາຍ;

8. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

**4.4. ໜ້າທີ່ອື່ນ**

1. ສ້າງຮ່າງແຜນການເຄື່ອນໄຫວວຽກງານ ແລະ ແຜນການຕິດຕາມກວດກາຂອງຄົບໃນແຕ່ລະໄລຍະ;
2. ພົບປະ ແລະ ຮັບຟັງຄຳຄິດຄຳເຫັນຂອງປະຊາຊົນ ພ້ອມທັງ ເຜີຍແຜ່ແນວທາງນະໂຍບາຍ ແລະ ນິຕິກຳ ທີ່ຕິດພັນກັບຄວາມຮັບຜິດຊອບຂອງຄົບ;
3. ຄົ້ນຄວ້າ ແລະ ປະສານສົມທົບກັບຄະນະເລຂາທິການສະພາແຫ່ງຊາດ ເພື່ອສະເໜີຄະນະປະຈຳສະພາແຫ່ງຊາດພິຈາລະນາ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງຂອງກົມ ທີ່ເປັນເສນາທິການໃຫ້ແກ່ຄົບ;
4. ພົວພັນ, ປະສານສົມທົບກັບບັນດາກະຊວງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ເທິງນີ້ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຄົບ;
5. ພົວພັນ, ຮ່ວມມືກັບອົງການຈັດຕັ້ງຂອງຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;
6. ຝຶກອົບຮົມ, ຍົກລະດັບຄວາມຮູ້ ທາງດ້ານເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານລັດຖະກອນ ທີ່ຢູ່ໃນກົງຈັກຊ່ວຍວຽກຂອງຄົບ;
7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຄົບໃຫ້ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ;
8. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 5 ຂອບເຂດສິດ ຂອງກຳມາທິການ**

1. ທວງເອົາຮ່າງກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ບົດສະເໜີຕ່າງໆຂອງຂະແໜງການທີ່ກ່ຽວຂ້ອງ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຄົບ ເພື່ອຄົ້ນຄວ້າ, ກວດກາເນື້ອໃນ, ຢັ້ງຢືນຄວາມພ້ອມ ເພື່ອລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ;
2. ເຂົ້າຮ່ວມແຕ່ຫົວທີໃນການສ້າງ ແລະ ປັບປຸງກົດໝາຍ ໃນຂົງເຂດທີ່ຄົບຮັບຜິດຊອບ;
3. ມີຄຳເຫັນໃສ່ ຮ່າງ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ສົດຕະຍາບັນແກ່ສົນທິ ສັນຍາ ແລະ ສັນຍາສາກົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຄົບ;
4. ເຂົ້າຮ່ວມຮຽບຮຽງກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຄົບ ພາຍຫລັງທີ່ກອງປະຊຸມສະພາແຫ່ງຊາດໄດ້ຮັບຮອງເອົາດ້ານຫລັກການ ແລ້ວນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາກ່ອນ ນຳສະເໜີປະທານປະເທດ ອອກລັດຖະດຳລັດ ປະກາດໃຊ້ເປັນທາງການ;
5. ສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ຍົກເລີກນິຕິກຳໃຕ້ກົດໝາຍ ຂອງຂະແໜງການຕ່າງໆທີ່ຢູ່ໃນຄວາມຮັບຜິດຊອບຂອງຄົບ ທີ່ເຫັນວ່າຂັດກັບລັດຖະທຳມະນູນ ແລະ ກົດໝາຍ;
6. ເຂົ້າຮ່ວມ, ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງວິໄສທັດ, ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງຂະແໜງການກ່ຽວຂ້ອງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຄົບ;

7. ທວງເອົາເອກະສານ, ບົດລາຍງານກ່ຽວກັບການປະຕິບັດ, ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ ຈາກຂະແໜງການທີ່ກ່ຽວຂ້ອງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເພື່ອຄົ້ນຄວ້າ, ກວດກາເນື້ອໃນ ແລະ ລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ;

8. ຮຽກໂຮມກຳມະການຂອງກຳມາທິການ ເພື່ອຄົ້ນຄວ້າ, ປະກອບຄຳເຫັນໃສ່ ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ໂຄງການລົງທຶນຂະໜາດໃຫຍ່ ຫຼື ໂຄງການລົງທຶນທີ່ມີຜົນກະທົບທີ່ອ່ອນໄຫວຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ;

9. ທວງເອົາເອກະສານການລາຍງານການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ມະຕິຄະນະປະຈຳສະພາແຫ່ງຊາດ, ນິຕິກຳໃຕ້ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ ແລະ ມີຄຳເຫັນໃນກອງປະຊຸມສະພາແຫ່ງຊາດ;

10. ຊັກຖາມບຸກຄົນ ໃນອົງການບໍລິຫານລັດ, ສານປະຊາຊົນ, ໄອຍະການປະຊາຊົນ, ອົງການຈັດຕັ້ງອື່ນ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕໍ່ກັບບັນຫາທີ່ປະຊາຊົນສົນໃຈ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ທວງເອົາເອກະສານທີ່ກ່ຽວຂ້ອງ ຫຼື ເຊີນຄະນະນຳຂອງກະຊວງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນມາຊີ້ແຈງບັນຫາ ທີ່ກຳມາທິການ, ຄະນະປະຈຳສະພາແຫ່ງຊາດ, ສະພາແຫ່ງຊາດ ແລະ ປະຊາຊົນສ່ວນໃຫຍ່ມີຄວາມສົນໃຈ;

12. ຮຽກເຊີນລັດຖະມົນຕີ, ຮອງລັດຖະມົນຕີ ທີ່ຢູ່ໃນຂະແໜງການທີ່ຕົນຮັບຜິດຊອບ ມາຊີ້ແຈງບາງບັນຫາທີ່ເຫັນວ່າຍັງບໍ່ທັນຈະແຈ້ງ ກ່ອນຈະນຳສະເໜີລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຫຼື ກອງປະຊຸມສະພາແຫ່ງຊາດ ພິຈາລະນາ;

13. ສະເໜີຄະນະປະຈຳສະພາແຫ່ງຊາດແຕ່ງຕັ້ງໜ່ວຍງານສະເພາະກິດເມື່ອມີຄວາມຈຳເປັນ;

14. ສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາແຕ່ງຕັ້ງ ທີ່ປຶກສາ ຫຼື ຊ່ຽວຊານ ສະເພາະດ້ານກ່ຽວກັບວຽກງານເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຈາກພາຍໃນປະເທດ;

15. ຈັດກອງປະຊຸມກຳມາທິການ ແລະ ກອງປະຊຸມຄົບຄະນະຂອງກຳມາທິການ ເພື່ອຄົ້ນຄວ້າມີຄຳເຫັນຕໍ່ແຜນການເຄື່ອນໄຫວວຽກງານຂອງກຳມາທິການ, ຮ່າງແຜນຍຸດທະສາດ, ແຜນນະໂຍບາຍແຜນພັດທະນາເສດຖະກິດ-ສັງຄົມ ແລະ ການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

16. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງຄະ ນະປະຈຳສະພາແຫ່ງຊາດ.

## ໝວດທີ 3
## ໂຄງປະກອບກົງຈັກການຈັດຕັ້ງ

### ມາດຕາ 6 ໂຄງປະກອບກົງຈັກການຈັດຕັ້ງ

1. ປະທານກຳມາທິການ;
2. ຮອງປະທານກຳມາທິການຈຳນວນໜຶ່ງ;

3. ກຳມະການສັງກັດຢູ່ກຳມາທິການ;

4. ມີກົມທີ່ເປັນກົງຈັກຊ່ວຍວຽກຈຳນວນ 3 ກົມຄື:

   1) ກົມເສດຖະກິດການຜະລິດ

   2) ກົມເສດຖະກິດການບໍລິການ

   3) ກົມຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ນອກຈາກນີ້ ຍັງມີພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ທີ່ເປັນເສນາທິການທາງດ້ານວິຊາການໃຫ້ແກ່ຕົນ.

ສ່ວນການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງບັນດາກົມກົງຈັກວິຊາການ ແມ່ນຄະນະເລຂາທິການສະພາແຫ່ງຊາດ ອອກຂໍ້ຕົກລົງຕ່າງຫາກ.

**ມາດຕາ 7 ໜ້າທີ່ ແລະ ຂອບເຂດສິດ ຂອງປະທານກຳມາທິການ**

ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາວຽກງານລວມ, ແນວຄິດການເມືອງ ແລະ ການຈັດຕັ້ງຂອງກຳມາທິການ ແລະ ຮັບຜິດຊອບໂດຍກົງໃນການລາຍງານວຽກງານຮອບດ້ານຂອງກຳມາທິການ ຕໍ່ຄະນະປະຈຳສະພາແຫ່ງຊາດ;
2. ຊີ້ນຳການສ້າງແຜນການ ຂອງກຳມາທິການໃນແຕ່ລະໄລຍະ, ມອບໝາຍ ແລະ ແບ່ງຄວາມຮັບຜິດຊອບໃຫ້ບັນດາຮອງປະທານກຳມາທິການ ແລະ ກຳມະການສັງກັດກຳມາທິການ ໃນການປະຕິບັດໜ້າທີ່ວຽກງານ ຂອງກຳມາທິການຕົນ;
3. ຊີ້ນຳ ແລະ ລົງເລິກສະເພາະ ວຽກງານ ສ້າງ ແລະ ປັບປຸງກົດໝາຍ, ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ການຕ່າງປະເທດຂອງກຳມາທິການ;
4. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງກຳມາທິການ;
5. ຮຽກໂຮມ ແລະ ເປັນປະທານກອງປະຊຸມກຳມາທິການ ແລະ ກອງປະຊຸມຄົບຄະນະຂອງກຳມາທິການ;
6. ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ເຊັນເອກະສານຕ່າງໆ ກ່ຽວກັບວຽກງານຂອງກຳມາທິການ;
7. ຄົ້ນຄວ້າ ກ່ຽວກັບການແຕ່ງຕັ້ງ, ປົດຕຳແໜ່ງ, ສັບຊ້ອນ, ຍົກຍ້າຍ, ຍ້ອງຍໍ ຫຼື ປະຕິບັດວິໄນ ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ແລະ ປະສານສົມທົບກັບຄະນະເລຂາທິການສະພາແຫ່ງຊາດ ເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາ;
8. ສະເໜີ ແຕ່ງຕັ້ງ, ສັບຊ້ອນ ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ, ໄປຍົກລະດັບຝຶກອົບຮົມໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຫຼື ຮັບຜິດຊອບວຽກງານໃດໜຶ່ງ ຢູ່ພາຍໃນ ແລະ ຕ່າງປະເທດ;
9. ຮຽກເຊີນຄະນະນຳຂອງກະຊວງຕ່າງໆ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ມາຊີ້ແຈງອະທິບາຍເພີ່ມເຕີມ ກ່ຽວກັບບັນຫາຕ່າງໆ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳ, ກອງປະຊຸມຄົບຄະນະຂອງກຳມາທິການ ຫຼື ກອງປະຊຸມໃດໜຶ່ງ ຂອງກຳມາທິການ ຖ້າເຫັນວ່າ ມີຄວາມຈຳເປັນ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 8 ໜ້າທີ່ ແລະ ຂອບເຂດສິດ ຂອງຮອງປະທານກຳມາທິການ**

ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍປະທານກຳມາທິການ ໃນການຈັດຕັ້ງປະຕິບັດວຽກງານຂອງກຳມາທິການ, ຮັບຜິດຊອບຊີ້ນຳກົມ ແລະ ວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານກຳມາທິການ;
2. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ ຮ່າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ກົດໝາຍ ແລະ ວຽກງານອື່ນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ກວດກາເອກະສານສຳຄັນຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ກ່ອນຈະນຳສະເໜີຕໍ່ປະທານກຳມາທິການ ຫຼື ຄະນະປະຈຳສະພາແຫ່ງຊາດ;
4. ສະເໜີຕໍ່ປະທານກຳມາທິການ ກ່ຽວກັບການແຕ່ງຕັ້ງ, ປົດຕຳແໜ່ງ, ສັບຊ້ອນ, ຍົກຍ້າຍ, ຍ້ອງຍໍ ຫຼື ປະຕິບັດວິໄນພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ສະເໜີຕໍ່ປະທານກຳມາທິການແຕ່ງຕັ້ງ, ສັບຊ້ອນ ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອເຂົ້າຮ່ວມກອງປະຊຸມ, ໄປຍົກລະດັບ, ຝຶກອົບຮົມໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຫຼື ຮັບຜິດຊອບວຽກງານໃດໜຶ່ງ ຢູ່ພາຍໃນ ແລະ ຕ່າງປະເທດ;
6. ລົງລາຍເຊັນໃສ່ເອກະສານຕ່າງໆ ແລະ ປະຕິບັດໜ້າທີ່ແທນປະທານກຳມາທິການ ໃນກໍລະນີທີ່ໄດ້ຮັບມອບສິດຈາກກຳມາທິການ;
7. ປະຕິບັດໜ້າທີ່ແທນປະທານກຳມາທິການໃນກໍລະນີ ທີ່ໄດ້ຮັບມອບສິດໃຫ້ປະຈຳການ ຫຼື ເປັນປະທານກອງປະຊຸມໃດໜຶ່ງ ຕາມການມອບໝາຍ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງປະທານກຳມາທິການ ຫຼື ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 9 ໜ້າທີ່ ແລະ ຂອບເຂດສິດ ຂອງກຳມະການສັງກັດກຳມາທິການ**

ກຳມະການສັງກັດກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍເນື້ອໃນນິຕິກຳ ແລະ ແຜນການເຄື່ອນໄຫວວຽກງານ ຂອງກຳມາທິການໃຫ້ເປັນແຜນການເຄື່ອນໄຫວວຽກງານໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າ ປະກອບຄຳເຫັນໃສ່ນິຕິກຳ ຫຼື ເອກະສານຕ່າງ ທີ່ກຳມາທິການສົ່ງໃຫ້;
3. ເຂົ້າຮ່ວມຄົ້ນຄວ້າແຕ່ຫົວທີ ໃນການຄົ້ນຄວ້າຈັດແບ່ງໂຄງການລົງທຶນຂອງລັດ, ການຈັດແບ່ງງົບປະມານຂອງຂະແໜງການ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
4. ຊຸກຍູ້ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ພົບປະ ປະຊາຊົນ ນຳເອົາຂໍ້ສະເໜີ ຄຳຄິດເຫັນຂອງປະຊາຊົນ ລາຍງານຕໍ່ກຳມາທິການ ເພື່ອຊາບ ແລະ ມີທິດຊີ້ນຳໃນການຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳ ລວມທັງ ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ;
6. ເຂົ້າຮ່ວມກອງປະຊຸມຄົບຄະນະຂອງກຳມາທິການ, ສະເໜີບັນຫາ, ປະກອບຄຳເຫັນ ແລະ ລົງຄະແນນສຽງຮັບຮອງເອົາບັນຫາ ທີ່ນຳມາພິຈາລະນາໃນກອງປະຊຸມ. ໃນກໍລະນີທີ່ບໍ່ສາມາດເຂົ້າກອງປະຊຸມໄດ້ ກຳມະການຜູ້ນັ້ນ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ປະທານກຳມາທິການຊາບ ກ່ອນມື້ໄຂກອງປະຊຸມ;

7. ສະຫຼຸບ, ຕີລາຄາ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ໃນແຕ່ລະໄລຍະ ຢ່າງເປັນປົກກະຕິ ຕໍ່ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ກຳມາທິການຂອງຕົນຊາບ. ໃນກໍລະນີທີ່ມີບັນຫາ ຫຼື ສະພາບການທີ່ພົ້ນເດັ່ນ ໃຫ້ລາຍງານຢ່າງທັນການ ຕໍ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາໃຫ້ທັນການ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງປະທານກຳມາທິການ ແລະ ປະ ທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ.

## ໝວດທີ 4

## ກອງປະຊຸມ

### ມາດຕາ 10 ກອງປະຊຸມຂອງກຳມາທິການ

ກອງປະຊຸມຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີສອງປະເພດ ຄື:

1. ກອງປະຊຸມຄະນະນຳກຳມາທິການ;
2. ກອງປະຊຸມຄົບຄະນະກຳມາທິການ.

### ມາດຕາ 11 ກອງປະຊຸມຄະນະນຳກຳມາທິການ

ກອງປະຊຸມຄະນະນຳກຳມາທິການ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານກຳມາທິການ ເປັນຜູ້ຮຽກໂຮມ ແລະ ເປັນປະທານ ກອງປະຊຸມ ຊຶ່ງມີຮອງປະທານ ແລະ ກຳມະ ເຂົ້າຮ່ວມ.

ກອງປະຊຸມຄະນະນຳກຳມາທິການ ມີ ເນື້ອໃນ ດັ່ງນີ້:

1. ຄົ້ນຄວ້າເອກະສານຕ່າງໆ ກ່ຽວກັບວຽກງານຂົງເຂດເສດຖະກິດ ທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
2. ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານປະຈຳເດືອນຕໍ່ໜ້າຂອງກຳມາທິການ;
3. ຄົ້ນຄວ້າຮ່າງຮ່າງນິຕິກຳທີ່ພົວພັນກັບວຽກງານ ຂອງກຳມາທິການຕົນ ແລະ ປະກອບຄຳເຫັນ ໃສ່ຮ່າງນິຕິກຳຕ່າງໆ ຂອງບັນດາກຳມາທິການອື່ນ ຫຼື ຂອງຄະນະປະຈຳສະພາແຫ່ງຊາດ;
4. ປຶກສາຫາລື ການປະຕິບັດວຽກງານຕົວຈິງ ເປັນຕົ້ນ ເນື້ອໃນ, ວິທີການ ແລະ ຮູບການຕິດຕາມກວດກາວຽກງານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ຄົ້ນຄວ້າ, ວິໄຈ ສະພາບການ, ບັນຫາທີ່ພົ້ນເດັ່ນທີ່ພົວພັນກັບກຳມາທິການຂອງຕົນ ແລະ ສະເໜີມາດຕະການແກ້ໄຂ ເພື່ອລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ໃຫ້ທິດຊີ້ນຳ;
6. ຮັບຟັງ ການລາຍງານຂອງຂະແໜງການ ແລະ ອົງການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ສົນໃຈ ແລະ ປະກອບຄຳຄິດຄຳເຫັນ, ໃຫ້ຄຳແນະນຳ ກ່ຽວກັບການແກ້ໄຂບັນຫາທີ່ຍັງຄ້າງຄາ;
7. ຄົ້ນຄວ້າ ກະກຽມ ກອງປະຊຸມຄົບຄະນະຂອງກຳມາທິການ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ແລະ ວຽກງານອື່ນທີ່ຈຳເປັນ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງກຳມາທິການຕົນ;

8. ຄົ້ນຄວ້າ, ພິຈາລະນາ ການແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ, ຍ້ອງຍໍ ຫຼື ປະຕິບັດວິໄນ ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບ ຄະນະເລຂາທິການສະພາແຫ່ງຊາດ ກ່ອນນໍາສະເໜີຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ;
9. ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການບໍາລຸງສ້າງ, ການຝຶກອົບຮົມ, ພະນັກງານ ທີ່ເປັນເສນາທິການຂອງຕົນ ຕາມການສະເໜີຂອງຄະນະເລຂາທິການສະພາແຫ່ງຊາດ;
10. ເນື້ອໃນອື່ນໆ ຖ້າເຫັນວ່າມີຄວາມຈໍາເປັນ.

**ມາດຕາ 12 ກອງປະຊຸມຄົບຄະນະ ຂອງກໍາມາທິການ**

ກອງປະຊຸມຄົບຄະນະຂອງກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເປີດຂຶ້ນ ຢ່າງໜ້ອຍ 1 ເທື່ອຕໍ່ປີ ກ່ອນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ໂດຍການຮຽກໂຮມ ແລະ ການເປັນປະທານ ຂອງປະທານກໍາມາທິການ ຊຶ່ງມີ ຮອງປະທານ ແລະ ກໍາມະການສັງກັດກໍາມາທິການ ເຂົ້າຮ່ວມ ຢ່າງໜ້ອຍສອງສ່ວນສາມ ຂອງຈໍານວນກໍາມະການທັງໝົດ. ໃນກໍລະນີທີ່ເຫັນວ່າ ມີຄວາມຈໍາເປັນ ກອງປະຊຸມຄົບຄະນະຂອງກໍາມາທິການ ຈະເປີດຂຶ້ນໃນເວລາໃດກໍໄດ້ ຫຼື ຈະເປີດຮ່ວມກັບກໍາມາທິການອື່ນກໍໄດ້ ຫຼື ເຊີນບຸກຄົນອື່ນທີ່ກ່ຽວຂ້ອງເຂົ້າຮ່ວມນໍາກໍໄດ້ ຕາມການເຫັນດີຂອງຄະນະປະຈໍາສະພາແຫ່ງຊາດ.

ກອງປະຊຸມຄົບຄະນະຂອງກໍາມາທິການ ພິຈາລະນາ ບັນຫາຕ່າງໆ ດັ່ງນີ້:
1. ບົດລາຍງານການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວປະຈໍາປີຂອງກໍາມາທິການ;
2. ຄົ້ນຄວ້າ ແລະ ປະກອບຄໍາເຫັນໃສ່ ຮ່າງ ວິໄສທັດ, ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງຂະແໜງການກ່ຽວຂ້ອງ ທີ່ຕົນຮັບຜິດຊອບ;
3. ຄົ້ນຄວ້າປະກອບຄໍາເຫັນໃສ່ຮ່າງກົດໝາຍ ແລະ ຮ່າງນິຕິກໍາອື່ນ ຕາມການມອບໝາຍຂອງຄະນະປະຈໍາສະພາແຫ່ງຊາດ;
4. ຜ່ານແຜນການຕິດຕາມກວດກາການຈັດຕັ້ງປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ພ້ອມທັງ ວາງມາດຕະການແກ້ໄຂ ຜົນຂອງການຕິດຕາມກວດກາດັ່ງກ່າວ;
5. ຮັບຟັງການລາຍງານຂອງຂະແໜງການ ແລະ ອົງການທີ່ກ່ຽວຂ້ອງ ກ່ຽວກັບ ການປະຕິບັດວຽກງານໃດໜຶ່ງ, ບັນຫາທີ່ສົນໃຈ, ຊັກຖາມບັນຫາຕ່າງໆ ທີ່ເຫັນວ່າບໍ່ທັນຈະແຈ້ງ ພ້ອມທັງ ໃຫ້ຄໍາແນະນໍາວິທີການແກ້ໄຂບັນຫາດັ່ງກ່າວ ທີ່ເຫັນວ່າເໝາະສົມ;
6. ກໍານົດການແບ່ງປັນໃຫ້ກໍາມະການຂອງກໍາມາທິການ ປະກອບຄໍາເຫັນຕໍ່ຫົວຂໍ້ຕ່າງໆ ຢູ່ກອງປະຊຸມສະພາແຫ່ງຊາດ;
7. ກໍານົດຄໍາຊັກຖາມໃນຂົງເຂດວຽກງານເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຕໍ່ຂະແໜງການຕ່າງໆ ຢູ່ໃນກອງປະຊຸມສະພາແຫ່ງຊາດ;
8. ຄົ້ນຄວ້າ, ພິຈາລະນາ ບັນຫາອື່ນໆ ຕາມການມອບໝາຍຂອງຄະນະປະຈໍາສະພາແຫ່ງຊາດ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 13 ຫຼັກການ**

ກຳມາທິການເສດຖະກິດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ນິຕິທຳ, ຍຸຕິທຳ, ປະຕິບັດໜ້າທີ່ວຽກງານ ຕາມລະບອບປະຊຸມ ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະກັບ ການຍົກສູງຄວາມຮັບຜິດຊອບຂອງບຸກຄົນທີ່ໄດ້ຮັບມອບໝາຍ ແລະ ຕົກລົງບັນຫາຕາມສຽງສ່ວນຫຼາຍ.

**ມາດຕາ 14 ແບບແຜນວິທີເຮັດວຽກ**

ກຳມາທິການເສດຖະກິດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ປະຕິບັດວຽກງານຕາມແຜນການຂອງສະພາແຫ່ງຊາດ ໂດຍຫັນມາເປັນແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ຂອງກຳມາທິການ, ສູ້ຊົນປະຕິບັດໃຫ້ສຳເລັດ, ມີການຕິດຕາມກວດກາ, ມີການສະຫຼຸບ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບສ່ອງແສງລາຍງານ ຂໍຄຳເຫັນ, ຂໍທິດຊີ້ນຳ ຈາກການນຳຢ່າງເປັນປົກກະຕິ.

**ມາດຕາ 15 ການພົວພັນ ແລະ ປະສານງານ ພາຍໃນສະພາແຫ່ງຊາດ**

ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເຄື່ອນໄຫວວຽກງານໂດຍມີການພົວພັນ ແລະ ປະສານງານກັບການຈັດຕັ້ງພາຍໃນສະພາແຫ່ງຊາດ ດັ່ງນີ້:

**1. ການພົວພັນ ແລະ ປະສານງານ ກັບຄະນະປະຈຳສະພາແຫ່ງຊາດ**

ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີການພົວພັນ ແລະ ປະສານງານກັບຄະນະປະຈຳສະພາແຫ່ງຊາດ ໃນຖານະເປັນກົງຈັກເສນາທິການ ເພື່ອຂໍທິດຊີ້ນຳ ແລະ ລາຍງານກ່ຽວກັບການເຄື່ອນໄຫວວຽກງານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ.

**2. ການພົວພັນ ແລະ ປະສານງານ ກັບບັນດາກຳມາທິການພາຍໃນສະພາແຫ່ງຊາດ**

ກຳມາທິການເສດຖະກິດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີການພົວພັນ ແລະ ປະສານງານກັບກຳມາທິການອື່ນ ພາຍໃນສະພາແຫ່ງຊາດ ດ້ວຍຮູບການ ຈັດກອງປະຊຸມ, ປຶກສາຫາລື, ປະສານສົມທົບ ແລະ ການແລກປ່ຽນຂໍ້ມູນຂ່າວສານ, ການຖອດຖອນບົດຮຽນຊຶ່ງກັນ ແລະ ກັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອຮັບປະກັນເຮັດໃຫ້ການຄົ້ນຄວ້າພິຈາລະນາບັນຫາຕ່າງໆ ມີຄວາມເປັນເອກະພາບນຳກັນ ເປັນຕົ້ນ:

1) ການສ້າງ ແລະ ປັບປຸງກົດໝາຍ, ຮ່າງລັດຖະບັນຍັດ, ດຳລັດ ແລະ ນິຕິກຳລຸ່ມກົດໝາຍອື່ນທີ່ກ່ຽວຂ້ອງລວມທັງ ການຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ພົວພັນກັບວຽກງານເສດຖະກິດ;
2) ການຕົກລົງບັນຫາສຳຄັນຕ່າງໆ ທີ່ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ, ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ຕໍ່ບັນຫາສັງຄົມ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
3) ປະສານສົມທົບ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ, ບຳລຸງສ້າງ, ຍົກລະດັບ ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ;
4) ການຕິດຕາມກວດກາ ແລະ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ;

5) ວຽກງານອື່ນທີ່ກ່ຽວຂ້ອງ.

**3. ການພົວພັນ ແລະ ປະສານງານ ກັບຄະນະເລຂາທິການສະພາແຫ່ງຊາດ**

ກຳມາທິການເສດຖະກິດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີການພົວພັນ ແລະ ປະສານງານກັບຄະນະເລຂາທິການສະພາແຫ່ງຊາດ ດ້ວຍຮູບການປຶກສາຫາລື, ປະສານສົມທົບ, ການສະໜອງຂໍ້ມູນຂ່າວສານຕ່າງໆ ເປັນຕົ້ນ:

1) ການສ້າງແຜນການ ແລະ ສະຫຼຸບລາຍງານປະຈຳເດືອນ, ປະຈຳງວດ, ປະຈຳ 6 ເດືອນ, ປະຈຳປີ ແລະ 5 ປີ ກ່ຽວກັບການເຄື່ອນໄຫວວຽກງານຂອງກຳມາທິການຕົນ;
2) ປະສານສົມທົບ ກ່ຽວກັບການກະກຽມເອກະສານຕ່າງໆ ໃຫ້ແກ່ການດຳເນີນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ການບໍລິການເອກະສານ ເຂົ້າ-ອອກ ຜ່ານປະຕູດຽວ;
3) ສະເໜີກ່ຽວກັບການແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ ພະນັກງານຂອງກຳມະທິການ ລວມທັງ ການບຳລຸງສ້າງ, ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ, ຝຶກອົບຮົມ, ການເຄື່ອນໄຫວວຽກງານພາຍໃນ, ຕ່າງປະເທດ ແລະ ການປະຕິບັດນະໂຍບາຍຕໍ່ພະນັກງານທີ່ມີຜົນງານດີເດັ່ນ;
4) ການຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນຜ່ານປະຕູດຽວ;
5) ປະສານກ່ຽວກັບ ສິ່ງອຳນວຍຄວາມສະດວກດ້ານວຽກງານບໍລິຫານ ແລະ ການເງິນ ໃຫ້ແກ່ການເຄື່ອນໄຫວວຽກງານຂອງກຳມາທິການ;
6) ວຽກງານອື່ນທີ່ກ່ຽວຂ້ອງ.

**4. ການພົວພັນ ແລະ ປະສານງານ ກັບສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ**

ກຳມາທິການເສດຖະກິດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີການພົວພັນ ແລະ ປະສານງານ ກັບສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ດ້ວຍການປະສານສົມທົບ, ປຶກສາຫາລື, ການສະໜອງຂໍ້ມູນຂ່າວສານຕ່າງໆ ທີ່ຕິດພັນກັບການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ, ການສ້າງ ແລະ ການປັບປຸງກົດໝາຍ, ການພັດທະນາຊັບພະຍາກອນມະນຸດໃນຂົງເຂດເສດຖະກິດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ເຂົ້າຮ່ວມການຝຶກອົບຮົມສຳມະນາຕ່າງໆ ທີ່ສະຖາບັນຈັດຂຶ້ນ.

**5. ການພົວພັນ ແລະ ປະສານງານ ກັບສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີການພົວພັນ ແລະ ປະສານງານກັບສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ດ້ວຍຮູບການປະສານສົມທົບ, ປຶກສາຫາລື, ການສະໜອງຂໍ້ມູນ-ຂ່າວສານຕ່າງໆ ດັ່ງນີ້:

1) ການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ;
2) ການຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງກອງປະຊຸມສະພາແຫ່ງຊາດຢູ່ທ້ອງຖິ່ນ;
3) ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ແລະ ການຕົກລົງບັນຫາສຳຄັນອື່ນ ທີ່ຕິດພັນກັບວຽກງານຂອງກຳມາທິການເຂດເລືອກຕັ້ງ;

4) ການບຳລຸງສ້າງ ຍົກລະດັບ ພະນັກງານວິຊາການ ທີ່ເປັນໜ່ວຍງານຂອງກຳມາທິການປະຈຳຢູ່ແຕ່ລະເຂດເລືອກຕັ້ງ;

5) ການປະຕິບັດວຽກງານອື່ນທີ່ກ່ຽວຂ້ອງ.

**ມາດຕາ 16 ການພົວພັນ ແລະ ປະສານງານກັບພາກສ່ວນພາຍນອກ**

ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີການພົວພັນ ແລະປະສານງານກັບພາກສ່ວນອື່ນຂອງລັດຖະບານ, ອົງການປົກຄອງທ້ອງຖິ່ນ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນ ດ້ວຍຮູບການປຶກສາຫາລື, ປະສານສົມທົບ ແລະ ການສະໜອງຂໍ້ມູນຂ່າວສານຕ່າງໆ ຕາມແຕ່ກໍລະນີ ດັ່ງນີ້:

1. ການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ;
2. ການຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ;
3. ທວງເອົາເອກະສານຕ່າງໆ ເຊັ່ນ: ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງດຳລັດ, ສົນທິສັນຍາ, ສັນຍາສາກົນ, ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງຂະແໜງການ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ແລະ ພົວພັນກັບວຽກງານຂອງກຳມາທິການຕົນ;
4. ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ແລະ ການຄົ້ນຄວ້າບັນຫາສຳຄັນອື່ນ ທີ່ຕິດພັນກັບວຽກງານຂອງກຳມາທິການໃນເຂດເລືອກຕັ້ງຕ່າງໆ;
5. ການບຳລຸງສ້າງ ຍົກລະດັບ ພະນັກງານວິຊາການ ທີ່ເປັນເສນາທິການຂອງກຳມາທິການ;
6. ການປະຕິບັດວຽກງານອື່ນທີ່ກ່ຽວຂ້ອງ.

## ໝວດທີ6
## ງົບປະມານ ແລະ ຕາປະທັບ

**ມາດຕາ 17 ງົບປະມານ ຂອງກຳມາທິການ**

ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີງົບປະມານຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ ຕາມງົບປະມານຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 18 ຕາປະທັບ ຂອງກຳມາທິການ**

ກຳມາທິການເສດຖະກິດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີຕາປະທັບສະເພາະຂອງຕົນ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເບື້ອໃນຢູ່ຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ" ເບື້ອງລຸ່ມຂຽນຊື່ "ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ" ຊຶ່ງຂຶ້ນດ້ວຍຮູບດາວຫ້າແຈ.

# ໝວດທີ 7
# ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ມະຕິສະບັບນີ້ ປ່ຽນແທນ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະບັບເລກທີ 0117/ຄປຈ, ລົງວັນທີ 22/8/2016 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

**ປອ ໄຊສົມພອນ ພົມວິຫານ**